ທະບຽນເຂົ້າ
ເລກທີ -0809 ກວດ
ລົງວັນທີ 3 0 APR 2014
ເວລາ......
ລົງເຊັນ......

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------

ລັດຖະບານ ເລກທີ 151 /ລບ

ນະຄອນຫຼວງວຽງຈັນ, ວັນທີ 28 . 4 . 2014

# ດຳລັດ
# ວ່າດ້ວຍໂຮງໝໍເອກະຊົນ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ສະບັບເລກທີ 02/ສພຊ, ລົງວັນທີ 08 ກໍລະກົດ 2009;
- ອີງຕາມ ກົດໝາຍວ່າດ້ວຍ ການປິ່ນປົວ ສະບັບເລກທີ 09/ສພຊ, ລົງວັນທີ 09 ພະຈິກ 2005;
- ອີງຕາມ ໜັງສືສະເໜີຂອງ ລັດຖະມົນຕີວ່າການ ກະຊວງສາທາລະນະສຸກ ສະບັບເລກທີ 0206/ສທ, ລົງວັນທີ 12 ກຸມພາ 2014.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງການດຳເນີນກິດຈະການ ໂຮງໝໍເອກະຊົນ ເພື່ອໃຫ້ການຈັດຕັ້ງ ແລະ ການເຄື່ອນໄຫວຂອງໂຮງໝໍດັ່ງກ່າວຖືກຕ້ອງຕາມນະໂຍບາຍຂອງພັກ ແລະ ລະບຽບກົດໝາຍ ຂອງລັດຖະບານ ແນໃສ່ເຮັດໃຫ້ການບໍລິການ ສາທາລະນະສຸກ ມີຄຸນນະພາບ, ມີປະສິດທິພາບ ແລະ ຍຸຕິທຳ.

**ມາດຕາ 2 ໂຮງໝໍເອກະຊົນ**

ໂຮງໝໍເອກະຊົນ ແມ່ນສະຖານທີ່ບໍລິການ ກວດພະຍາດ, ບົ່ງມະຕິ, ປິ່ນປົວ, ຟື້ນຟູ, ສົ່ງເສີມ ສຸຂະພາບ ແລະ ກັນພະຍາດ ຂອງພາກເອກະຊົນ ທີ່ໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກ ຊຶ່ງມີການປະກອບອຸປະກອນການແພດ, ຕຽງນອນ ແລະ ຜູ້ປະກອບວິຊາຊີບປິ່ນປົວ ຕາມລະບຽບການ.

**ມາດຕາ 3 ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ທີ່ດຳເນີນກິດຈະການໂຮງໝໍເອກະຊົນ ຢູ່ ສປປ ລາວ.

## ໝວດທີ 2
## ປະເພດ, ລັກສະນະ, ຂະໜາດ ໂຮງໝໍເອກະຊົນ

**ມາດຕາ 4 ປະເພດໂຮງໝໍເອກະຊົນ**

ໂຮງໝໍເອກະຊົນປະກອບມີ ສອງ ປະເພດ ດັ່ງນີ້:

1). ໂຮງໝໍເອກະຊົນລົງທຶນ ຮ້ອຍສ່ວນຮ້ອຍ (100%);

2). ໂຮງໝໍຮຸ້ນສ່ວນ ລັດ ກັບ ເອກະຊົນ.

**ມາດຕາ 5 ລັກສະນະໂຮງໝໍເອກະຊົນ**

ໂຮງໝໍເອກະຊົນມີ ສາມ ລັກສະນະ ດັ່ງນີ້:

1). ໂຮງໝໍທົ່ວໄປ ຊຶ່ງແມ່ນສະຖານທີ່ບໍລິການດ້ານການປິ່ນປົວແຕ່ລະຂັ້ນ ໂດຍປະກອບດ້ວຍຫຼາຍວິຊາການທາງການແພດທີ່ແຕກຕ່າງກັນ ແຕ່ອາດຈະລົງເລິກວິຊາການແພດຊ່ຽວຊານໃດໜຶ່ງ;

2). ໂຮງໝໍສະເພາະວິຊາ ຊຶ່ງແມ່ນສະຖານທີ່ບໍລິການດ້ານການປິ່ນປົວແຕ່ລະຂັ້ນ ທີ່ເນັ້ນໃສ່ແຕ່ໝວດວິຊາການແພດໃດໜຶ່ງ ທີ່ເປັນລັກສະນະຊ່ຽວຊານສະເພາະວິຊາເປັນຕົ້ນຕໍ;

3). ໂຮງໝໍການແພດພື້ນເມືອງ ຊຶ່ງແມ່ນສະຖານທີ່ບໍລິການດ້ານການປິ່ນປົວແຕ່ລະຂັ້ນ ທີ່ເນັ້ນໃສ່ວິຊາການແພດພື້ນເມືອງເປັນຕົ້ນຕໍ.

**ມາດຕາ 6 ຂັ້ນ ຂອງໂຮງໝໍເອກະຊົນ**

ໂຮງໝໍເອກະຊົນມີ ສາມ ຂັ້ນ ດັ່ງນີ້:

ຂັ້ນ 1. ເປັນໂຮງໝໍຂະໜາດໃຫຍ່

ຂັ້ນ 2. ເປັນໂຮງໝໍຂະໜາດກາງ

ຂັ້ນ 3. ເປັນໂຮງໝໍຂະໜາດນ້ອຍ

ໂຮງໝໍທຸກປະເພດ, ລັກສະນະ ແລະ ຂັ້ນ ຕ້ອງມີບຸກຄະລະກອນທີ່ມີຄຸນນະພາບ ແລະ ອຸປະກອນການແພດທີ່ທັນສະໄໝ ໃນລະດັບການບໍລິການປິ່ນປົວຂັ້ນສູງສຸດ, ຂັ້ນສູງ ແລະ ຂັ້ນກາງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13, 14 ແລະ 15 ຂອງກົດໝາຍວ່າດ້ວຍ ການປິ່ນປົວ.

## ໝວດທີ 3
## ການຈັດຕັ້ງ ແລະ ການເຄື່ອນໄຫວຂອງໂຮງໝໍເອກະຊົນ

### ມາດຕາ 7 ພາລະບົດບາດຂອງໂຮງໝໍເອກະຊົນ

ໃນການສະໜອງການບໍລິການໂຮງໝໍເອກະຊົນ ຕາມການອະນຸຍາດໃຫ້ດຳເນີນກິດຈະການໂດຍກະຊວງສາທາລະນະສຸກ ແລະ ມີພາລະບົດບາດດຳເນີນການໃຫ້ບໍລິການປິ່ນປົວ ທີ່ໄດ້ມາດຕະຖານ, ມີລະດັບເຕັກນິກ ເຕັກໂນໂລຊີ ທີ່ແຕກຕ່າງກັນ ແລະ ມີຄວາມສະເໝີພາບຕໍ່ໜ້າກົດໝາຍໃນການໃຫ້ບໍລິການ.

### ມາດຕາ 8 ໜ້າທີ່ ການບໍລິການຂອງໂຮງໝໍເອກຊົນ

ໂຮງໝໍເອກະຊົນ ມີໜ້າທີ່ ດັ່ງນີ້:

1. ປະຕິບັດການດ້ານເຕັກນິກ ເຕັກໂນໂລຊີ ການແພດ ທີ່ໄດ້ມາດຕະຖານ ແລະ ຖືກຕ້ອງ;
2. ສ້າງຕັ້ງ, ຈັດຕັ້ງ, ການເຄື່ອນໄຫວ ແລະ ການຄົ້ນຄວ້າວິທະຍາສາດທາງດ້ານການແພດ ຢູ່ທັງພາຍໃນປະເທດ ແລະ ສາກົນໃຫ້ສອດຄ່ອງ;
3. ສົມທົບກັບພາກລັດໃຫ້ການສຶກສາຕໍ່ເນື່ອງ, ຝຶກອົບຮົມແກ່ແພດ, ພະຍາບານ ແລະ ພະນັກງານສາທາລະນະສຸກອື່ນໆ.

### ມາດຕາ 9 ຂອບເຂດສິດຂອງໂຮງໝໍເອກະຊົນ

ໂຮງໝໍເອກະຊົນ ມີຂອບເຂດສິດ ຕົ້ນຕໍ ດັ່ງນີ້:

1. ຕາມເນື້ອໃນທີ່ໄດ້ຮັບອະນຸຍາດ ແລະ ຕາມລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ;
2. ດຳເນີນວຽກງານຕາມລະບອບລະບຽບຂອງໂຮງໝໍເອກະຊົນ;
3. ຕິດຕໍ່ພົວພັນ, ເຊັນສັນຍາ, ບົດບັນທຶກຕ່າງໆ ກັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ໂດຍສອດຄ່ອງກັບເງື່ອນໄຂ ແລະ ລະບຽບກົດໝາຍ ຂອງ ສປປ ລາວ.

### ມາດຕາ 10 ຜູ່ບໍລິຫານຄຸ້ມຄອງໂຮງໝໍເອກະຊົນ

ຜູ່ອຳນວຍການ ຝ່າຍວິຊາການແພດຂອງໂຮງໝໍເອກະຊົນ ທີ່ຕ່າງປະເທດມາລົງທຶນດຳເນີນກິດຈະການໂຮງໝໍເອກະຊົນ ຕ້ອງມີທ່ານໝໍ ທີ່ເປັນຄົນສັນຊາດລາວຢ່າງໜ້ອຍ ໜຶ່ງ ທ່ານ ທີ່ມີເງື່ອນ

ໄຂ, ມາດຕະຖານທາງດ້ານວິຊາການ ແລະ ປະສົບການດ້ານການປິ່ນປົວ ສິບປີ ຂຶ້ນໄປ, ຖ້າຍັງເປັນລັດຖະກອນຢູ່, ຕ້ອງໄດ້ຂໍອະນຸຍາດຈາກ ສະພາຄຸ້ມຄອງວິຊາຊີບປິ່ນປົວ ຂອງກະຊວງສາທາລະນະສຸກ ແລະ ອະນຸຍາດໃຫ້ເຮັດໄດ້ແຕ່ນອກໂມງການເທົ່ານັ້ນ, ມີປະຫວັດການເຄື່ອນໄຫວດີຕະຫຼອດມາ ນັບທັງດ້ານຈັນຍາທຳ ແລະ ບໍ່ເຄີຍຖືກສານຕັດສິນລົງໂທດ ໃນສະຖານການກະທຳຜິດກ່ຽວກັບວິຊາຊີບດ້ານນີ້.

**ມາດຕາ 11 ການບັນຈຸພະນັກງານເຂົ້າໃນໂຮງໝໍເອກະຊົນ**

ພະນັກງານວິຊາການ ຂອງໂຮງໝໍເອກະຊົນ ໃຫ້ປະຕິບັດ ດັ່ງນີ້:

1. ການບັນຈຸພະນັກງານ ເຂົ້າເຮັດວຽກໃນໂຮງໝໍເອກະຊົນ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍແຮງງານ ຂອງ ສປປ ລາວ;
2. ກໍລະນີເປັນພະນັກງານບຳນານ, ບຳເນັດ ຫຼື ອອກຈາກລັດຖະການໄປແລ້ວ ທີ່ມີໃບຢັ້ງຢືນວິຊາຊີບປິ່ນປົວ ຊຶ່ງໄດ້ຮັບການຢັ້ງຢືນຈາກໂຮງໝໍທີ່ຜູ່ກ່ຽວເຄີຍເຮັດວຽກຜ່ານມາ;
3. ໃນກໍລະນີທີ່ຜູ່ປະກອບວິຊາຊີບປິ່ນປົວ ເປັນຄົນຕ່າງປະເທດ ຕ້ອງໄດ້ຖືກຮັບຮູ້ ແລະ ຢັ້ງຢືນຈາກສະພາຄຸ້ມຄອງວິຊາຊີບປິ່ນປົວ ຂອງກະຊວງສາທາລະນະສຸກ;
4. ຜູ່ປະກອບວິຊາຊີບປິ່ນປົວແຕ່ລະວິຊາລະດັບຊັ້ນກາງຂຶ້ນເມືອ ທີ່ຖືສັນຊາດລາວ ທີ່ຈະເຂົ້າເຮັດວຽກໃນໂຮງໝໍເອກະຊົນ ຕ້ອງມີໃບຢັ້ງຢືນເປັນຜູ່ປະກອບວິຊາຊີບປິ່ນປົວ ຈາກກະຊວງສາທາລະນະສຸກ;
5. ຖ້າຍັງເປັນລັດຖະກອນ ອະນຸຍາດໃຫ້ເຮັດວຽກນຳໂຮງໝໍເອກະຊົນ ໄດ້ແຕ່ສະເພາະນອກໂມງລັດຖະການເທົ່ານັ້ນ.

**ມາດຕາ 12 ພັນທະຂອງໂຮງໝໍເອກະຊົນ**

ໂຮງໝໍເອກະຊົນ ມີພັນທະ ດັ່ງນີ້:

1. ດຳເນີນການໃຫ້ບໍລິການໃນການປິ່ນປົວ ຕາມກົດໝາຍວ່າດ້ວຍການປິ່ນປົວ ແລະ ລະບຽບກົດໝາຍອື່ນ ທີ່ກ່ຽວຂ້ອງຂອງ ສ ປປ ລາວ;
2. ໃຫ້ການບໍລິການປິ່ນປົວໃນກໍລະນີສຸກເສີນ ກະທັນຫັນ ແກ່ຜູ່ທີ່ທຸກຍາກ ແລະ ລາຍໄດ້ໜ້ອຍ;
3. ປະກອບສ່ວນໃນວຽກງານພັດທະນາແຜນນະໂຍບາຍ ແລະ ຍຸດທະສາດດ້ານການປິ່ນປົວ ຂອງລັດໃນແຕ່ລະໄລຍະ;
4. ລາຍງານຂໍ້ມູນການບໍລິການ, ສະຖິຕິພະຍາດ ແລະ ການແກ້ໄຂ ສະພາບພະຍາດລະບາດຕໍ່ຫ້ອງການສາທາລະນະສຸກເມືອງ, ເທດສະບານ, ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ແລະ ກະຊວງສາທາລະນະສຸກ;

5. ລາຍງານສະພາບການເຄື່ອນໄຫວຂອງໂຮງໝໍຕົນ ເປັນແຕ່ລະໄລຍະ ຕາມຄວາມເປັນຈິງໃຫ້ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ແລະ ກະຊວງສາທາລະນະສຸກ;

6. ປະສານສົມທົບກັບກະຊວງສາທາລະນະສຸກ ໃນການກຳນົດຄ່າບໍລິການໃນແຕ່ລະໄລຍະ;

7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ທີ່ກ່ຽວຂ້ອງ.

**ມາດຕາ 13 ການນຳເຂົ້າອຸປະກອນ ແລະ ຜະລິດຕະພັນການແພດ**

ການນຳເຂົ້າອຸປະກອນ ແລະ ຜະລິດຕະພັນການແພດ ເພື່ອຮັບໃຊ້ໃນການດຳເນີນກິດຈະການບໍລິການປິ່ນປົວ ຂອງໂຮງໝໍເອກະຊົນ ໃນ ສປປ ລາວ ຕ້ອງໄດ້ຮັບອະນຸຍາດຢ່າງຖືກຕ້ອງ ຈາກອົງການທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ຂອງ ສປປ ລາວ.

**ມາດຕາ 14 ນະໂຍບາຍຂອງລັດຕໍ່ການດຳເນີນກິດຈະການໂຮງໝໍເອກະຊົນ**

ລັດມີນະໂຍບາຍສົ່ງເສີມສະເພາະ ແລະ ຈະໄດ້ຮັບນະໂຍບາຍຜ່ອນຜັນການເກັບຄ່າເຊົ່າ ຫຼື ສຳປະທານທີ່ດິນຂອງລັດ, ພາສີ, ອາກອນ ແລະ ຄ່າທຳນຽມຕ່າງໆໃນການນຳເຂົ້າ ອຸປະກອນ, ຜະລິດຕະພັນການແພດ ແລະ ການດຳເນີນກິດຈະການໂຮງໝໍເອກະຊົນ ທຸກປະເພດ, ທຸກລັກສະນະ ແລະ ທຸກຂັ້ນ.

## ໝວດທີ 4
## ການຂໍອະນຸຍາດດຳເນີນກິດຈະການໂຮງໝໍເອກະຊົນ

**ມາດຕາ 15 ການດຳເນີນກິດຈະການໂຮງໝໍເອກະຊົນ**

ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງດຳເນີນກິດຈະການໂຮງໝໍເອກະຊົນ ກ່ອນອື່ນຕ້ອງຍື່ນຄຳຮ້ອງຕໍ່ ກະຊວງອຸດສາຫະກຳ ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍວິສາຫະກິດ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ, ຫຼັງຈາກນັ້ນເອກະສານດັ່ງກ່າວຈະໄດ້ສົ່ງມາ ກະຊວງສາທາລະນະສຸກ ເພື່ອມີຄຳເຫັນໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ ພິຈາລະນາ ອອກໃບທະບຽນວິສາຫະກິດ.

**ມາດຕາ 16 ການຍື່ນຄຳຮ້ອງຂໍດຳເນີນກິດຈະການໂຮງໝໍເອກະຊົນ**

ຫຼັງຈາກໄດ້ໃບທະບຽນວິສາຫະກິດຈາກ ກະຊວງອຸດສາຫະກຳ ແລະ ການຄ້າແລ້ວ ບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງດຳເນີນກິດຈະການໂຮງໝໍເອກະຊົນ ຕ້ອງໄດ້ມາຍື່ນຄຳຮ້ອງ ພ້ອມດ້ວຍເອກະສານປະກອບຄຳຮ້ອງ ຕໍ່ກະຊວງສາທາລະນະສຸກ. ເພື່ອຂໍດຳເນີນ ກິດຈະການບໍລິການໂຮງໝໍເອກະຊົນ ຊຶ່ງຈະໄດ້ປະຕິບັດຕາມແບບພິມທີ່ ກະຊວງສາທາລະນະສຸກກຳນົດ.

**ມາດຕາ 17 ການພິຈາລະນາ ແລະ ການອະນຸຍາດໃຫ້ດຳເນີນກິດຈະການ**

ພາຍຫຼັງໄດ້ຮັບຄຳຮ້ອງ ແລະ ໄດ້ກວດກາເອກະສານປະກອບຄຳຮ້ອງຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂອງດຳລັດສະບັບນີ້ແລ້ວ ກະຊວງສາທາລະນະສຸກ ຕ້ອງພິຈາລະນາ ອອກໃບອະນຸຍາດ ດຳເນີນກິດຈະການໂຮງໝໍເອກະຊົນ ໃຫ້ຜູ້ຮ້ອງຂໍດັ່ງກ່າວ ພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ.

ໂຮງໝໍເອກະຊົນ ທີ່ໄດ້ດຳເນີນການບໍລິການປິ່ນປົວມາແລ້ວ ຫາກຕ້ອງການຂະຫຍາຍ, ເພີ່ມກິດຈະການ, ຂະໜາດ ຂອງໂຮງໝໍ ຫຼື ຢາກຂະຫຍາຍສາຂາ ຢູ່ແຫ່ງອື່ນ ຕ້ອງປະກອບເອກະສານ ຂໍອະນຸຍາດນຳກະຊວງ ສາທາລະນະສຸກ, ກະຊວງອຸດສະຫະກຳ ແລະ ການຄ້າ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 5
## ການມອບໂອນ ແລະ ຍຸບເລີກໂຮງໝໍເອກະຊົນ

**ມາດຕາ 18 ການມອບໂອນກິດຈະການ**

ໃນກໍລະນີ ຜູ້ເປັນເຈົ້າຂອງໂຮງໝໍເອກະຊົນ ບໍ່ສາມາດດຳເນີນກິດຈະການຕໍ່ໄປໄດ້ອີກ ຍ້ອນເຫດຜົນໃດໜຶ່ງ ຫຼື ມີຈຸດປະສົງຢາກມອບກິດຈະການໃຫ້ຄົນອື່ນ ຕ້ອງແຈ້ງເປັນລາຍລັກອັກສອນພ້ອມທັງເອກະສານ ແລະ ສັນຍາ ລະຫວ່າງ ເຈົ້າຂອງເກົ່າ ແລະ ເຈົ້າຂອງໃໝ່ ໃຫ້ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງສາທາລະນະສຸກຊາບ ກ່ອນຫົກເດືອນ.

**ມາດຕາ 19 ການຍຸບເລີກໂຮງໝໍເອກະຊົນ**

ໂຮງໝໍເອກະຊົນ ຈະຖືກຍຸບເລີກ ໃນກໍລະນີໃດໜຶ່ງ ດັ່ງນີ້ :

1. ການຈັດຕັ້ງ ແລະ ດຳເນີນກິດຈະການບໍ່ຖືກຕ້ອງຕາມເງື່ອນໄຂ ແລະ ລະບຽບກົດໝາຍທີ່ກຳນົດໄວ້;
2. ຜູ້ລົງທຶນຂໍປິດກິດຈະການ ໂດຍສະເໜີຕໍ່ກຳມະການທີ່ກ່ຽວຂ້ອງ ຢ່າງໜ້ອຍ ຫົກເດືອນ ກ່ອນຈະປິດກິດຈະການ ແລະ ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ;
3. ເມື່ອກວດພົບເຫັນວ່າ ມີການລະເມີດລະບຽບກົດໝາຍ ຂອງ ສປປ ລາວ ຢ່າງຮ້າຍແຮງ.

ຂະແໜງການສາທາລະນະສຸກ ຕ້ອງລາຍງານໃຫ້ຂັ້ນເທິງພິຈາລະນາ ກ່ຽວກັບການຍຸບເລີກກິດຈະການໂຮງໝໍເອກະຊົນ ຕາມແຕ່ລະກໍລະນີ.

# ໝວດທີ 6
# ມາດຕະການຈັດຕັ້ງປະຕິບັດ

## ມາດຕາ 20 ການຄຸ້ມຄອງ ແລະ ກວດກາ

ກະຊວງສາທາລະນະສຸກ, ອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ ເປັນຜູ້ຄຸ້ມຄອງ ແລະ ກວດກາ ການດຳເນີນກິດຈະການຂອງໂຮງໝໍເອກະຊົນ, ຖ້າຫາກພົບເຫັນການເຄື່ອນໄຫວ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ, ຂະແໜງການສາທາລະນະສຸກ ຕ້ອງສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແຕ່ງຕັ້ງຄະນະກຳມະການລົງກວດກາ ໂຮງໝໍດັ່ງກ່າວ.

- ສຳລັບຂັ້ນສູນກາງ: ມອບໃຫ້ກະຊວງສາທາລະນະສຸກ ເປັນຜູ້ຄຸ້ມຄອງ ແລະ ກວດກາ ຕາມປົກກະຕິ ໜຶ່ງຄັ້ງຕໍ່ປີ ແລະ ກວດກາໄດ້ທຸກເມື່ອ ຖ້າຫາກມີການສະເໜີຂອງ ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ.
- ສຳລັບຂັ້ນທ້ອງຖິ່ນ: ມອບໃຫ້ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ເປັນຜູ້ຄຸ້ມຄອງ ແລະ ກວດກາ ຢ່າງໜ້ອຍ ສອງຄັ້ງຕໍ່ປີ ແລະ ກວດກາໄດ້ທຸກເມື່ອ ຖ້າຫາກມີການລາຍງານຂອງຄອບຄົວຄົນເຈັບ ຫຼື ອົງການປົກຄອງທ້ອງຖິ່ນ.

## ມາດຕາ 21 ຂໍ້ຫ້າມສຳລັບການບໍລິການ ຂອງໂຮງໝໍເອກະຊົນ

ຫ້າມໂຮງໝໍເອກະຊົນດຳເນີນການບໍລິການ ດັ່ງນີ້:

1. ດຳເນີນການຄ້າຜະລິດຕະພັນ ແລະ ອະໄວຍະວະ ຈາກຮ່າງກາຍຂອງມະນຸດ ທີ່ມີຊີວິດຢູ່ ຫຼື ເສຍຊີວິດແລ້ວ;
2. ໂຄສະນາເກີນຄວາມເປັນຈິງດ້ວຍຮູບການຕ່າງໆ ເພື່ອໃຫ້ຄົນເຈັບມາປິ່ນປົວນຳໂຮງໝໍຂອງຕົນ;
3. ນຳເຂົ້າອຸປະກອນ, ຢາ ແລະ ຜະລິດຕະພັນການແພດ ທີ່ບໍ່ໄດ້ຮັບອະນຸຍາດ ມາບໍລິການປິ່ນປົວໃນໂຮງໝໍຢ່າງເດັດຂາດ;
4. ນຳເຂົ້າອຸປະກອນການແພດເກົ່າ (ເຄື່ອງມືສອງ) ມາບໍລິການໃນໂຮງໝໍເອກະຊົນ;
5. ນຳເຂົ້າອຸປະກອນ, ຢາ ແລະ ຜະລິດຕະພັນການແພດ ເພື່ອມາຈຳໜ່າຍສູ່ທ້ອງຕະຫຼາດ ຄືກັບບໍລິສັດຢາ ແລະ ອຸປະກອນການແພດ ຂາອອກ-ຂາເຂົ້າ;
6. ດຳເນີນການບໍລິການປິ່ນປົວ ແລະ ອອກໃບອະນຸຍາດທາງດ້ານການແພດ ທີ່ບໍ່ຖືກຕ້ອງຕາມກົດໝາຍວ່າດ້ວຍ ການປິ່ນປົວ ແລະ ກົດໝາຍອື່ນ ທີ່ກ່ຽວຂ້ອງ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 22 ເຄື່ອງໝາຍ ແລະ ຕາປະທັບ**

ກະຊວງສາທາລະນະສຸກ ເປັນຜູ້ພິຈາລະນາ ຮັບຮອງເຄື່ອງໝາຍ ຂອງໂຮງໝໍເອກະຊົນແຕ່ລະປະເພດຕາມການສະເໜີຂອງພວກກ່ຽວ.

ໂຮງໝໍເອກະຊົນ ມີຕາປະທັບເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານ.

**ມາດຕາ 23 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງສາທາລະນະສຸກ ເປັນເຈົ້າການປະສານສົມທົບ ກັບກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

**ມາດຕາ 24 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດສະບັບເລກທີ 016/ນຍ, ລົງວັນທີ 09 ກຸມພາ 1998.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະບານ ແຫ່ງ ສປປ ລາວ

ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ